**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການແຂວງ                                                                                    ເລກທີ 780/ຫອຂ

ອັດຕະປື, ວັນທີ 27 ກັນຍາ 2017

## ແຈ້ງການ

**ເຖິງ:** ຄະນະກຳມະການຊື້ຂາຍ-ຂາຍລົດຂັ້ນແຂວງ

**ເລື່ອງ:** ການປະມູນຂາຍລົດ Benz ກກ 6930 ແລະ ການທວງໜີ້ສິນຂາຍລົດນາພະນັກງານບຳນານ

- ອີງຕາມ ການຕົກລົງເຫັນດີເປັນເອກະພາບໃນກອງປະຊຸມຄະນະປະຈຳພັກແຂວງ ຮ່ວມກັບເຈົ້າແຂວງ-ຮອງເຈົ້າແຂວງ ຄັ້ງວັນທີ 26 ກັນຍາ 2017.

ຫ້ອງວ່າການແຂວງ ຖືເປັນກຽດແຈ້ງການຕາມການຕົກລົງ ແລະ ຊີ້ນຳຂອງກອງປະຊຸມຄະນະປະຈຳພັກແຂວງ ຮ່ວມ ກັບເຈົ້າແຂວງ-ຮອງເຈົ້າແຂວງ ມາຍັງທ່ານປະຕິບັດ ດັ່ງນີ້:

1. ກ່ຽວກັບການປະມູນຂາຍລົດຍີ່ຫໍ້ Benz ກກ 6930 ແມ່ນເຫັນດີມອບໃຫ້ ຄະນະກຳມະການຂັ້ນແຂວງຈັດຕັ້ງການປະມູນຂາຍ ຕາມແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

2. ບັນຫາທີ່ພະນັກງານບຳນານຫລາຍທ່ານທີ່ໄດ້ຮັບນະໂຍບາຍຊື້ຜ່ອນພາຫານະໃນໄລຍະຜ່ານມາ, ຈຳນວນໜຶ່ງແມ່ນໄດ້ຮັບນະໂຍບາຍໃຫ້ຫລ້າ, ຈຳນວນໜຶ່ງແມ່ນຕ້ອງໄດ້ຈ່າຍໃນລາຄາຜ່ອນ ແຕ່ວ່າການຈັດຕັ້ງປະຕິບັດຕົວຈິງ ພະນັກງານບຳນານບາງທ່ານຍັງມີການປຽບທຽບຊັ່ງຊາ, ບໍ່ໄປເຮັດສັນຍາ, ຜູ້ທີ່ມີສັນຍາແລ້ວກໍ່ບໍ່ຍອມຊຳລະ ດ້ວຍຫລາຍເງື່ອນໄຂ; ຕໍ່ບັນຫານີ້ແມ່ນມອບໃຫ້ຄະນະກຳມະການຂັ້ນແຂວງ ສືບຕໍ່ປະຕິບັດ ໂດຍຖືເອົາຫລັກການທີ່ໄດ້ຕົກລົງນະໂຍບາຍຜ່ານມາ, ໄປເຈລະນານຳພະນັກງານບຳນານໃຫ້ເພິ່ນເຂົ້າໃຈຫລັກການຂອງການນະໂຍບາຍຜ່ານມາ, ລະດົມໃຫ້ເພິ່ນໄປເຮັດສັນຍາ ຫລື ເອົາສັນຍາໄປໃຫ້ເພິ່ນຢູ່ເຮືອນ ໃນກໍລະນີທີ່ເພິ່ນບໍ່ມີເວລາ. ໃນນີ້ໃຫ້ແກ້ໄຂບັນຫາລົດທີ່ຕິດປ້າຍລັດຢູ່ນຳພະນັກງານບຳນານທີ່ໄປເຄື່ອນໄຫວຜິດກົດໝາຍ, ຕ້ອງໄດ້ປົດປ້າຍຟ້າອອກ, ຕິດປ້າຍເຫລືອງ; ສ່ວນເປົ້າໝາຍອື່ນໆ ຈຶ່ງຄ່ອຍແກ້ໄຂຕາມແຕ່ລະກໍລະນີ.

ດັ່ງນັ້ນ, ຈິ່ງແຈ້ງການມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ບ່ອນນຳສົ່ງ:

- ຄະນະປະຈຳພັກແຂວງ 09 ສະບັບ ( ເພື່ອຊາບ )
- ຄະນະຫ້ອງວ່າການແຂວງ 06 ສະບັບ ( ເພື່ອຕິດຕາມ )
- ເປົ້າໝາຍຂ້າງເທິງ 01 ສະບັບ ( ເພື່ອປະຕິບັດ )
- ຂະແໜງພັກ, ລັດ, ປະເມີນຜົນ 03 ສະບັບ ( ເພື່ອຕິດຕາມ )
- ເກັບຮັກສາໄວ້ 01 ສະບັບ

ແຂວງອັດຕະປື ຫ້ອງວ່າການ

ທະນູໄຊ ບັນຊາລິດ